# ເງື່ອນໄຂການອອກຈຳໜ່າຍຮຸ້ນ

**ຂຽນໂດຍ: ທ່ານ ບົວລຳພູ ຄຳມະນີວົງ, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ**

ອີງຕາມລະບຽບວ່າດ້ວຍການອອກຈຳໜ່າຍຮຸ້ນ, ສະບັບເລກທີ 018/ຄຄຊ, ລົງວັນທີ 27 ກໍລະກົດ 2015 ຊຶ່ງບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນບໍລິສັດມະຫາຊົນ;
2. ສ້າງຕັ້ງ ແລະ ເຄື່ອນໄຫວມາແລ້ວຢ່າງໜ້ອຍ ສາມປີ ຍົກເວັ້ນກໍລະນີ ບໍລິສັດ ມີການແຍກ, ຄວບ ຫຼື ທັບ ເປັນບໍລິສັດຮູບແບບໃໝ່ຈາກບໍລິສັດເດີມທີ່ສ້າງຕັ້ງ ແລະ ເຄື່ອນໄຫວ ຢ່າງໜ້ອຍ ສາມ ປີ;
3. ມີສະພາບໍລິຫານ ທີ່ປະກອບດ້ວຍ ສະມາຊິກອິດສະຫຼະຢ່າງໜ້ອຍ ໜຶ່ງສ່ວນສາມ ຂອງຈຳນວນສະມາຊິກສະພາບໍລິຫານທັງໝົດ ທີ່ໄດ້ຮັບການແຕ່ງຕັ້ງຈາກກອງປະຊຸມຜູ້ຖືຮຸ້ນ;
4. ມີຄະນະກຳມະການກວດກາພາຍໃນ ທີ່ປະກອບດ້ວຍ ສະມາຊິກທັງໝົດຢ່າງໜ້ອຍ ສາມທ່ານ ທີ່ໄດ້ຮັບການແຕ່ງຕັ້ງຈາກສະພາບໍລິຫານ ໃນນັ້ນ ສອງສ່ວນສາມ ຕ້ອງເປັນສະມາຊິກອິດສະຫຼະ ຊຶ່ງຢ່າງໜ້ອຍ ໜຶ່ງທ່ານ ຕ້ອງມີຄວາມຮູ້ຄວາມສາມາດ ທາງດ້ານບັນຊີ ຫຼື ການເງິນ;
5. ມີແຜນການລະດົມທຶນ ແລະ ແຜນການນຳໃຊ້ທຶນທີ່ລະດົມໄດ້ ໂດຍຜ່ານການຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນ;
6. ມີເອກະສານລາຍງານການເງິນ ໜຶ່ງປີຄືນຫຼັງ ນັບແຕ່ປີຍື່ນຄຳຮ້ອງ ແລະ ເອກະສານປະກອບ ການຮ້ອງຂໍອອກຈຳໜ່າຍຮຸ້ນໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ ຊຶ່ງໄດ້ຮັບການກວດສອບຈາກບໍລິສັດກວດສອບ ແລະ ເອກະສານລາຍງານການເງິນ ປີສຸດທ້າຍ ກ່ອນວັນຍື່ນຄຳຮ້ອງ ແລະ ເອກະສານປະກອບ ການຮ້ອງຂໍອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງໄດ້ຮັບຄຳເຫັນແບບບໍ່ມີເງື່ອນໄຂ ຫຼື ແບບມີເງື່ອນໄຂ ທີ່ບໍ່ແມ່ນເງື່ອນໄຂສຳຄັນ ຊຶ່ງກະທົບຕໍ່ຜົນການດຳເນີນງານ ແລະ ຖານະການເງິນຂອງບໍລິສັດ;
7. ບໍ່ມີການປ່ຽນແປງປະເພດການດຳເນີນທຸລະກິດຕົ້ນຕໍໃນໄລຍະ ສາມປີ ຜ່ານມາ;
8. ມີລາຍຮັບປີສຸດທ້າຍ ກ່ອນມື້ຍື່ນເອກະສານປະກອບການຮ້ອງຂໍອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ບໍ່ຫຼຸດໜຶ່ງຕື້ກີບ, ບໍ່ມີຂາດທຶນສະສົມ, ການດຳເນີນທຸລະກິດໃນ ໜຶ່ງ ປີຜ່ານມາມີກຳໄລສຸດທິ ແລະ ບໍ່ມີໜີ້ເກີນກຳນົດ ຊຶ່ງຄ້າງຊຳລະຕົ້ນທຶນ ຫຼື ດອກເບ້ຍ ສ່ວນໃດສ່ວນໜຶ່ງ ຫຼື ທັງໝົດ ຕາມທີ່ໄດ້ກຳນົດໄວ້ໃນສັນຍາກູ້ຢືມ;
9. ມີການຢັ້ງຢືນຄວາມພ້ອມ ການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຈາກທີ່ປຶກສາດ້ານການເງິນ ພ້ອມດ້ວຍລາຍຊື່ທີມງານທີ່ຮັບຜິດຊອບເປັນທີ່ປຶກສາດ້ານການເງິນ;
10. ມີການຄ້ຳປະກັນການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ລະຫວ່າງ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ກັບ ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ;
11. ມີແຜນການກ່ຽວກັບ ການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ, ການເຄື່ອນໄຫວທຸລະກິດ ແລະ ການຄາດຄະເນຖານະການເງິນ ຢ່າງໜ້ອຍ ສາມປີ ຕໍ່ໜ້າ ນັບແຕ່ປີສຳເລັດການອອກຈຳໜ່າຍຮຸ້ນໃຫ້ແກ່ ມວນຊົນ ເປັນຕົ້ນໄປ ໂດຍຜ່ານການຮັບຮອງຈາກສະພາບໍລິຫານ;
12. ມີເງື່ອນໄຂອື່ນຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ບັນດາທ່ານຈະເຫັນວ່າ ການລະດົມທຶນ ຈາກມວນຊົນຂອງບໍລິສັດ ບໍ່ແມ່ນໃຜກໍ່ສາມາດເຮັດໄດ້, ຕ້ອງມີເງື່ອນໄຂຄົບຖ້ວນຄືດັ່ງທີ່ໄດ້ກ່າວມາຂ້າງເທິງ. ການກຳນົດເງື່ອນໄຂດັ່ງກ່າວຂ້າງເທິງ ກໍ່ເພື່ອໃຫ້ຮັບປະກັນໄດ້ຄວາມໜ້າເຊື່ອຖື, ຄວາມໂປ່ງໃສ ແລະ ສັກກະຍາພາບ ໃນການດຳເນີນທຸລະກິດຂອງບໍລິສັດ. ການລົງທຶນນຳບໍລິສັດ ທີ່ບໍ່ມີເງື່ອນໄຂ ຄົບຖ້ວນ ດັ່ງກ່າວຂ້າງເທິງນັ້ນ ຈະເຮັດໃຫ້ການລົງທຶນມີຄວາມສ່ຽງສູງ, ບໍ່ສະເພາະແຕ່ຄວາມສ່ຽງ ທີ່ຈະບໍ່ໄດ້ຮັບຜົນຕອບແທນໃນດ້ານດອກເບ້ຍ ຫຼື ເງິນປັນຜົນເທົ່ານັ້ນ, ແຕ່ລວມເຖິງຄວາມສ່ຽງທີ່ຈະສູນເສຍຕົ້ນທຶນ ທີ່ໄດ້ເອົາໄປລົງທຶນນຳບໍລິສັດດັ່ງກ່າວ. ສະນັ້ນ, ກ່ອນທີ່ບັນດາທ່ານຈະຕັດສິນໃຈລົງທຶນນຳບໍລິສັດໃດ ກໍ່ຄວນສຶກສາຂໍ້ມູນຕາມເງື່ອນໄຂທີ່ກຳນົດໄວ້ຂ້າງເທິງກ່ອນ ເພື່ອປ້ອງກັນບໍ່ໃຫ້ເກີດຄວາມອັບປະໂຫຍດ ຕໍ່ກັບເງິນລົງທຶນຂອງພວກເຮົາໃນພາຍຫຼັງ.